**ອາທິດທີ 3 ແຫ່ງພຣະກາຣີສຕະສົມພົບ**

**ສະຫລອງພຣະກຣິສໂຕຮັບສີນລ້າງ**

**ວັນອາທິດທີ 13 ມັງກອນ 2019**



**ພຣະວໍລະສານໂດຍນັກບຸນລູກາ 3, 15-16, 21-22**

ປະຊາຊົນທີ່ຄອງຖ້າພຣະມະຫາໄຖ່ຕ່າງພາກັນຄິດວ່າຢວງນີ້ອາດຈະແມ່ນພຣະກຣິສໂຕກໍບໍ່ຮູ້; ຢວງຈຶ່ງເວົ້າກັບພວກເຂົາວ່າ: ເຮົາລ້າງພວກເຈົ້າດ້ວຍນໍ້າເທົ່ານັ້ນ ແຕ່ຍັງມີຜູ້ໜຶ່ງຊົງອຳນາດກວ່າເຮົາພວມມາ. ເຮົາເອງບໍ່ສົມຈະແກ້ສາຍເກີບຂອງພຣະອົງຊໍ້າ. ພຣະອົງນັ້ນຈະລ້າງພວກເຈົ້າໃນພຣະຈິດເຈົ້າແລະໄຟ.

ເມື່ອປະຊາຊົນທັງໝົດຮັບພິທີລ້າງແລ້ວ, ພຣະເຢຊູເຈົ້າກໍຮັບແລ້ວດ້ວຍ. ແລະໃນເວລາພຣະອົງກຳລັງພາວະນາຢູ່, ທ້ອງຟ້າກໍເປີດອອກແລະພຣະຈິດເຈົ້າສະເດັດລົງມາເໜືອພຣະອົງເປັນຮູບຊົງຄືນົກກາງແກ. ແລ້ວມີສຽງໜຶ່ງດັງມາຈາກທ້ອງຟ້າວ່າ: ທ່ານແມ່ນບຸດສຸດທີ່ຮັກຂອງເຮົາ. ເຮົາພໍພຣະໄທນຳທ່ານເປັນຢ່າງຍິ່ງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 3, 15-16, 21-22**

ເທດສະການໂນແອນ, ເປັນຊ່ວງເວລາທີ່ພຣະບຸດພຣະເຈົ້າສຳແດງພຣະອົງໃຫ້ແກ່ມວນມະນຸດ. ແລະຜູ້ທີ່ພົບພຣະອົງກ່ອນໝູ່ໝົດແມ່ນບັນດາຜູ້ຕ່ຳນ້ອຍນັ້ນຄືຜູ້ລ້ຽງແກະ, ຊາວໄຮ່ຊາວນາ. ຕໍ່ມາ, ພຣະອົງໄດ້ປະຈັກໃຫ້ພວກບັນດິດຄົນຕ່າງສາດສະໜາເຫັນພາຍໃຕ້ແສງສະວ່າງຂອງດວງດາວທີ່ນຳພວກເຂົາມາພົບພຣະອົງ. ແລະວັນນີ້, ຫລັງຈາກທີ່ພຣະເຢຊູເຈົ້າຮັບພິທີລ້າງ, ເວລາພຣະອົງພວມພາວະນາຢູ່, ກໍມີປາກົດການໜຶ່ງເກີດຂຶ້ນນັ້ນຄືທ້ອງຟ້າກໍເປີດອອກແລະມີພຣະຈິດເຈົ້າສະເດັດລົງມາເໜືອພຣະອົງພ້ອມດ້ວຍສຽງຂອງພຣະບິດາເຈົ້າກ່າວກັບພຣະເຢຊູວ່າ: ທ່ານແມ່ນບຸດສຸດທີ່ຮັກຂອງເຮົາ. ເຮົາພໍພຣະໄທນຳທ່ານເປັນຢ່າງຍິ່ງ. ໃນບົດນິພົນພຣະວໍລະສານທັງສີ່ເຫລັ້ມທີ່ກ່າວເຖິງການຮັບສິນລ້າງຂອງພຣະເຢຊູເຈົ້ານີ້, ມີແຕ່ນັກບຸນລູກາຜູ້ດຽວທີ່ຍົກໃຫ້ພວກເຮົາເຫັນພຣະເຢຊູເຈົ້າກຳລັງພາວະນາຢູ່. ແລະແມ່ນໃນເວລາພຣະອົງພາວະນານັ້ນກໍມີພຣະຈິດເຈົ້າສະເດັດລົງມາເໜືອພຣະອົງແລະກໍມີສຽງປາກເວົ້າຂອງພຣະບິດາເຈົ້າກ່າວກັບພຣະອົງ. ສິ່ງນີ້ມີຄວາມໝາຍແນວໃດສຳລັບຊີວິດກຣິສຕັງຂອງພວກເຮົາ? ແລະໃນສິນລ້າງບາບທີ່ພວກເຮົາໄດ້ຮັບ? ສິ່ງນີ້ຢາກບອກສອນພວກເຮົາວ່າ, ຜ່ານທາງສິນລ້າງບາບ, ພວກເຮົາໄດ້ກາຍເປັນລູກບຸນທຳຂອງພຣະບິດາເຈົ້າໂດຍທາງພຣະບຸດຂອງພຣະອົງຄືພຣະເຢຊູກຣິສໂຕ. ແຕ່ແມ່ນພຣະຈິດເຈົ້າທີ່ປາກເວົ້າໃນຕົວພວກເຮົາແລະແມ່ນພຣະຈິດນີ້ແລ້ວທີ່ຈະຊ່ວຍພວກເຮົາໃຫ້ຮູ້ຈັກພາວະນາແລະວອນຂໍຢ່າງຖືກຕ້ອງ. ແລະຍັງແມ່ນພຣະຈິດເຈົ້ານີ້ອີກທີ່ທຳໃຫ້ພວກເຮົາສາມາດເອີ້ນຫາພຣະບິດາເຈົ້າສະຫວັນວ່າ: ພໍ່ເອີຍ!

ດັ່ງນັ້ນຄຳພາວະນາຈຶ່ງເປັນສິ່ງຈຳເປັນແລະສຳຄັນສຳລັບພວກເຮົາຜູ້ໄດ້ຮັບສິນລ້າງບາບ. ແລະທຸກຄັ້ງທີ່ພວກເຮົາພາວະນາບໍ່ວ່າຈະຢູ່ໃນສະພາບຊີວິດໃດກໍຕາມ ພວກເຮົາກໍຈະໄດ້ຍິນສຽງປາກເວົ້າຂອງພຣະບິດາເຈົ້າທີ່ກ່າວກັບພວກເຮົາວ່າ: ເຈົ້າແມ່ນລູກສຸດທີ່ຮັກຂອງເຮົາ. ໝາຍຄວາມວ່າພຣະອົງຢູ່ຄຽງຂ້າງພວກເຮົາຜູ້ເປັນລູກຂອງພຣະອົງສະເໝີ. ພຣະອົງຈະບໍ່ປະຖິ້ມລູກຂອງພຣະອົງ. ແລະເປັນຕົ້ນພຣະອົງຈະສະດັບຟັງຄຳວອນຂໍຂອງພວກເຮົາຢ່າງແນ່ນອນ. ເພາະບໍ່ມີພໍ່ຜູ້ໃດ, ເມື່ອລູກຂໍເຂົ້າຈີ່ ຈະເອົາກ້ອນຫີນໃຫ້. ແລະເມື່ອລູກຂໍປາຈະເອົາງູໃຫ້. ດັ່ງນັ້ນ, ພໍ່ຜູ້ຢູ່ສະຫວັນຍິ່ງຕ້ອງປະທານໃຫ້ພວກເຮົາສິ່ງທີ່ປະເສີດແລະຍິ່ງໃຫຍ່ກວ່າສິ່ງທີ່ພວກເຮົາວອນຂໍນຳພຣະອົງອີກ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນສະຫລອງພຣະກຣິສໂຕຮັບສິນລ້າງນີ້ ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມໝາຍແລະຄວາມສຳຄັນຂອງການພາວະນາ. ແລະຖ້າພວກເຮົາຍັງບໍ່ພາວະນາເທົ່າທີ່ຄວນ ຫລືພວກເຮົາຍັງບໍ່ຮູ້ຈັກພາວະນາແລະວອນຂໍພຣະບິດາເຈົ້າ, ໃຫ້ພວກເຮົາຮ້ອງຫາພຣະຈິດເຈົ້າ, ພຣະອົງຈະສອນພວກເຮົາໃຫ້ພາວະນາແລະວອນຂໍສິ່ງທີ່ຈຳເປັນແລະສຳຄັນຈາກພຣະບິດາເຈົ້າ. ອາແມນ.

ຄຸນພໍ່ ອົງຕວນ ກຽດຕິສັກ